ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສໍານັກງານນາຍົກລັດຖະມົນຕີ ເລກທີ 017 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 11-01-2011

# ດໍາລັດ

## ວ່າດ້ວຍ ການສ້າງຕັ້ງປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ການສະເໜີ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 1678/ກປ, ລົງວັນທີ 10-12-2010.

## ນາຍົກລັດຖະມົນຕີ ອອກດໍາລັດ:

**ມາດຕາ 1: ຈຸດປະສົງ**

ດໍາລັດສະບັບນີ້ວາງອອກເພື່ອປະກາດສ້າງຕັ້ງ ປ່າສະຫງວນແຫ່ງຊາດພູສະບົດ-ປຸ່ງຈອງ ໂດຍການ ໂຮມເອົາສອງປ່າສະຫງວນ ລະດັບແຂວງ ຂອງແຂວງຊຽງຂວາງ ຄື: ປ່າສະຫງວນພູສະບົດ, ເມືອງໜອງແຮດ ແລະ ປ່າສະຫງວນພູປຸ່ງຈອງ, ເມືອງຄໍາ ເຂົ້າກັນ ຊຶ່ງຕໍ່ໄປນີ້ເອີ້ນວ່າ: ປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ.

ການສ້າງຕັ້ງປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ ແມ່ນແນໃສ່ຈຸດປະສົງຕົ້ນຕໍ ດັ່ງນີ້:

1. ເພື່ອປ້ອງກັນ,ປົກປັກຮັກສາປ່າໄມ້, ຊັບພະຍາກອນປ່າໄມ້, ພັນສັດນໍ້າ, ສັດປ່າ ແລະ ແຫຼ່ງກໍາເນີດຕົ້ນນໍ້າລໍາທານ ໃຫ້ມີຄວາມຍືນຍົງ;
2. ເພື່ອປົກປັກຮັກສາຄວາມອຸດົມສົມບູນຂອງທໍາມະຊາດ ແລະ ສິ່ງແວດລ້ອມທໍາມະຊາດ ໃຫ້ດຸ່ນດ່ຽງ, ສົດໃສ ແລະ ມີຊີວິດຊີວາ;
3. ເພື່ອອະນຸລັກຮັກສາໄວ້ ຊຶ່ງຄວາມສວຍງາມ ຂອງທິວທັດທໍາມະຊາດ, ເປັນບ່ອນພັກຜ່ອນ, ທ່ອງທ່ຽວ, ສຶກສາຄົ້ນຄ້ວາທາງດ້ານວິທະຍາສາດ;
4. ເພື່ອອະນຸລັກປົກປັກຮັກສາແຫຼ່ງແກ່ນພັນໄມ້ພື້ນເມືອງ ແນໃສ່ຮັບໃຊ້ການຂະຫຍາຍພັນ.

**ມາດຕາ 2. ຂອບເຂດປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ**

ຂອບເຂດປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ ແມ່ນອີງໃສ່ແຜນທີ່ພູມມີປະເທດ ຕາມມາດຕາສ່ວນ 1:100.000 ໂດຍຖືເອົາເສັ້ນຂະໜານ ແລະ ເສັ້ນແວງເປັນຫລັກ

ສົມທຽບໃສ່ກັບພື້ນທີ່ຕົວຈິງຄື: ສັນພູ (ສັນປັນນ້ຳ), ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ, ຈຸດລະດັບຕ່ຳສຸດ ແລະ ສູງສຸດເປັນຂີດໝາຍເພື່ອເຮັດໃຫ້ອົງການປົກຄອງທ້ອງຖິ່ນ ຕະຫລອດຮອດພໍ່ແມ່ປະຊາຊົນ ບັນດາເຜົ່າໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາເປັນຢ່າງດີ.

ຂອບເຂດ ແລະ ເນື້ອທີ່ຂອງເຂດທີ່ໄດ້ລະບຸໄວ້ໃນມາດຕາ 01 ຂອງດຳລັດສະບັບນີ້ ໃຫ້ເບິ່ງຕາມແຜນທີ່ ແລະ ເອກະສານ ທີ່ຄັດຕິດເຊິ່ງເປັນພາກສ່ວນໜຶ່ງຂອງດຳລັດສະບັບນີ້.

## ມາດຕາ 3. ທີ່ຕັ້ງ, ເນື້ອທີ່ ແລະ ຂອບເຂດຊາຍແດນ

ປ່າສະຫງວນແຫ່ງຊາດພູສະບົດ-ປຸ່ງຈອງຕັ້ງຢູ່ແຂວງຊຽງຂວາງ, ຊຶ່ງກວມເອົາສອງເມືອງ ຄື: ເມືອງຄຳ ແລະ ເມືອງໜອງແຮດ.

ປ່າສະຫງວນແຫ່ງຊາດ ພູສະບົດ-ປຸ່ງຈອງ ມີເນື້ອທີ່ທັງໝົດ 149,030 ຮຕ ( ໜຶ່ງແສນສີ່ສິບເກົ້າພັນສາມສິບເຮັກຕາ) ໃນນີ້ກວມເອົາເມືອງຄຳ 83.853 ຮຕ ( ແປດສິບສາມພັນແປດຮ້ອຍຫ້າ ສິບສາມເຮັກຕາ) ຫລືເທົ່າກັບ 57% ( ຫ້າສິບເຈັດສ່ວນຮ້ອຍ) ແລະ ເມືອງໜອງແຮດ 65.177 ຮຕ ( ຫົກສິບຫ້າພັນໜຶ່ງຮ້ອຍເຈັດສິບເຈັດເຮັກຕາ) ຫລືເທົ່າກັບ 43% ( ສີ່ສິບສາມສ່ວນຮ້ອຍ), ຕັ້ງຢູ່ເສັ້ນແວງທີ 100° 34' 50" ຫາ 101° 58' 04" ແລະ ເສັ້ນຂະໜານທີ 20° 18' 40" ຫາ 20° 50' 40" ຊຶ່ງມີຂອບເຂດຊາຍແດນລະອຽດ ດັ່ງນີ້:

1. ທິດເໜືອ ຕິດກັບຊາຍແດນ ເມືອງວຽງທອງ ແລະ ເມືອງຫົວເມືອງ ຂອງແຂວງຫົວພັນ;
2. ທິດໃຕ້ຕິດກັບເຂດບ້ານນ້ຳຈາດ, ເມືອງຄຳ ແລະ ເຂດກຸ່ມບ້ານຫ້ວຍລົມ ເມືອງໜອງແຮດ ຂອງແຂວງຊຽງຂວາງ;
3. ທິດຕາເວັນອອກ ຕິດກັບຊາຍແດນເມືອງຊຳໃຕ້ ຂອງແຂວງຫົວພັນ;
4. ທິດຕາເວັນຕົກ ຕິດກັບເຂດປ່າຜະລິດ ລ່ອງຄາວ-ລ່ອງຄານ, ເມືອງພູກູດ ແລະ ຕາມສາຍນ້ຳມັດ, ເມືອງຄຳ ຂອງແຂວງຊຽງຂວາງ.

## ມາດຕາ 4. ການຈັດຕັ້ງປະຕິບັດ

ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບ ກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫລວດໝາຍຂອບເຂດໃສ່ພື້ນທີ່ຕົວຈິງໃຫ້ຈະແຈ້ງ, ເພື່ອໃຫ້ທຸກພາກສ່ວນໄດ້ຮັບຊາບ ແລະ ເຂົ້າຮ່ວມໃນການປົກປັກຮັກສາ ປ່າສະຫງວນແຫ່ງຊາດດັ່ງກ່າວ ໃຫ້ມີຄວາມຍືນຍົງຕະຫລອດໄປ.

ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

### ມາດຕາ 5. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ. ບັນດາຂໍ້ກຳນົດ, ຄຳສັ່ງ, ລະບຽບການ ແລະ ການອະນຸຍາດຕ່າງໆ ໃນເມື່ອກ່ອນທີ່ຂັດກັບດຳລັດ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ທອງສິງ ທຳມະວົງ